ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 044 /ທຄຕລ.ສພບ.2025.
ນະຄອນຫຼວງວຽງຈັນ, ວັນທີ: 29 ສິງຫາ 2025

# ມະຕິ
## ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ
## ຄັ້ງທີ 04 ປະຈຳປີ 2025, ວັນທີ 29 ສິງຫາ 2025

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນ ຄັ້ງທີ 04 ປະຈຳປີ 2025 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 09:00-11:30ໂມງ ຂອງວັນທີ 29 ສິງຫາ 2025 ຢູ່ທີ່ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ສຸລິວັດ ສຸວັນນະຈູມຄຳ ປະທານສະພາບໍລິຫານ. ມີສະມາຊິກສະພາບໍລິຫານຈຳນວນ 07 ທ່ານ, ຜູ້ສັງເກດການ, ຄະນະອຳນວຍການ ແລະ ພະແນກກ່ຽວຂ້ອງ ເຂົ້າຮ່ວມ.

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

**I.** ຮັບຊາບການລາຍງານຄວາມຄືບໜ້າຂອງວຽກງານການເພີ່ມທຶນຂອງ ທຄຕລ.

**II.** ຮັບຮອງໜັງສືຊວນຊື້ການອອກຈຳໜ່າຍຮຸ້ນເພີ່ມທຶນ ຂອງ ທຄຕລ ແລະ ຮັບຮອງແຜນການອອກຈຳໜ່າຍຮຸ້ນຂອງ ທຄຕລ ພາຍຫຼັງທີ່ໄດ້ຮັບອະນຸຍາດອອກຈຳໜ່າຍຮຸ້ນໃຫ້ແກ່ມວນຊົນ ແລະ ຜູ້ຖືຮຸ້ນເດີມ ດັ່ງນີ້:

1. ຮັບຮອງການອອກຈຳໜ່າຍຮຸ້ນເພີ່ມທຶນໃຫ້ແກ່ຜູ້ຖືຮຸ້ນເດີມ ແລະ ມວນຊົນທົ່ວໄປ ຈຳນວນທັງໝົດ 506,255,500 ຮຸ້ນ, ມູນຄ່າການລະດົມທຶນສຳລັບການເພີ່ມທຶນທັງໝົດ 833,333,168,000 ກີບ;
2. ຮັບຮອງອັດຕາສ່ວນການອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ໃນອັດຕາສ່ວນ 1,100:500 (ໝາຍຄວາມວ່າ: ຮຸ້ນເດີມ 11 ຮຸ້ນ ສາມາດຈອງຊື້ຮຸ້ນໃໝ່ໄດ້ 5 ຮຸ້ນ ໂດຍເປັນທະວີຄູນຂອງ 100). ສຳລັບຮຸ້ນ RO ຖ້າຜູ້ຖືຮຸ້ນບໍ່ນຳໃຊ້ສິດຂອງຕົນ ຮຸ້ນດັ່ງກ່າວຈະເອົາມາຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ (PO);
3. ຮັບຮອງຈຳນວນຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ຈຳນວນ 472,098,300 ຮຸ້ນ, ໃນລາຄາອອກຈຳໜ່າຍ 1,640 ກີບຕໍ່ຮຸ້ນ;
4. ຮັບຮອງຈຳນວນຮຸ້ນທີ່ອອກຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ PO ຈຳນວນ 34,157,200 ຮຸ້ນ, ໃນລາຄາອອກຈຳໜ່າຍ 1,730 ກີບຕໍ່ຮຸ້ນ;
5. ຮັບຮອງມື້ປິດປຶ້ມບັນຊີທະບຽນຜູ້ຖືຮຸ້ນຂອງ ທຄຕລ ເພື່ອກຳນົດສິດໃຫ້ຜູ້ຖືຮຸ້ນເດີມ (RO) ໃນການຈອງຊື້ຮຸ້ນສາມັນເພີ່ມທຶນ ເຊິ່ງກຳນົດເອົາວັນທີ 11/09/2025;
6. ຮັບຮອງກຳນົດໄລຍະເວລາການອອກຈຳໜ່າຍໃຫ້ແກ່ຜູ້ຖືຮຸ້ນເດີມ RO ໃນການຈອງຊື້ຮຸ້ນໃໝ່ ໃນວັນທີ 22-26/09/2025;
7. ຮັບຮອງກຳນົດໄລຍະເວລາການອອກຈຳໜ່າຍໃຫ້ແກ່ມວນຊົນທົ່ວໄປ PO ໃນການຈອງຊື້ຮຸ້ນໃໝ່ ໃນວັນທີ 29/09-03/10/2025;
8. ຮັບຮອງມື້ຈົດທະບຽນຮຸ້ນສາມັນເພີ່ມທຶນໃນຕະຫຼາດຫຼັກຊັບລາວ ວັນທີ 05/11/2025.



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
ແຟັກ: (856-21) 213202, 223012, 223245, Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA

**III.** ຮັບຮອງການປັບປຸງຕົວຊີ້ວັດລະດັບຄວາມສ່ຽງທີ່ຍອມຮັບໄດ້ດ້ານສິນເຊື່ອ ແລະ ດ້ານຕະຫຼາດ ຂອງ ທຄຕລ.

**IV.** ຮັບຮອງເອກະສານລາຍງານການເງິນຂອງ ທຄຕລ ປະຈຳ 06 ເດືອນຕົ້ນປີ 2025 ທີ່ຜ່ານການທົບທວນໂດຍຜູ້ກວດສອບອິດສະລະ.

**V.** ຮັບຮອງການປ່ອຍກູ້ໃຫ້ລູກຄ້າບໍລິສັດ 02 ລາຍການ ທີ່ຂຶ້ນກັບສິດອະນຸມັດຂອງສະພາບໍລິຫານ.

**VI.** ຮັບຮອງການແຕ່ງຕັ້ງ ແລະ ສັບຊ້ອນບຸກຄະລາກອນຈຳນວນ 02 ຕຳແໜ່ງຂັ້ນຄະນະພະແນກໃນ ທຄຕລ.

**VII.** ຮັບຮອງການແຕ່ງຕັ້ງສະມາຊິກສະພາບໍລິຫານ ຈາກຄູ່ຮ່ວມຍຸດທະສາດ COFIBRED ແລະ ໃຫ້ເພີ່ມວາລະນີ້ເຂົ້າໃນວາລະຂອງກອງປະຊຸມຜູ້ຖືຮຸ້ນ ສະໄໝວິສາມັນ ປະຈຳປີ 2025 ເພື່ອພິຈາລະນາຮັບຮອງຕາມລະບຽບການ.

**ປະທານສະພາບໍລິຫານ**

**ສຸລິວັດ ສຸວັນນະຈູມຄຳ**



ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-3, 223243-4, 255080-5
Website: http:/www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA